


ສະບັບທີ 01. ວັນທີ 02 ກັນຍາ 2013

# ບົດຮຽນທີ່ສາມາດຖອດຖອນໄດ້ໃນການສ້າງລາຍຮັບຈາກການນຳເຂົ້າຂອງປະເທດສິງກະໂປ

## ກ. ປະຫວັດການພັດທະນາ

ສິງກະໂປ ເປັນປະເທດທີ່ມີປະຫວັດການພັດທະນາເສດຖະກິດທີ່ມີຈຸດພິເສດ ແລະ ເອກະລັກສະເພາະຂອງຕົນ; ການພັດທະນາປະເທດ ໂດຍຖືເອົາການພັດທະນາຄົນໃຫ້ກາຍເປັນຊັບພະຍາກອນອັນລໍ້າຄ່າຂອງການພັດທະນາ ໂດຍບວກກັບທີ່ຕັ້ງທີ່ເປັນສູນກາງຂອງການຄ້າພາກພື້ນ ແລະ ມີພື້ນຖານໂຄງລ່າງທີ່ຖືກສ້າງໄວ້ໃນໄລຍະເປັນຫົວເມືອງຂຶ້ນຂອງອັງກິດເຊັ່ນ: ເສັ້ນທາງ ແລະ ທ່າເຮືອກຳປັ່ນ[1] ໄດ້ກາຍເປັນແມ່ແຮງຍູ້ດັນເສດຖະກິດສິງກະໂປພາຍຫຼັງໄດ້ຮັບເອກະລາດປີ 1965 ຈາກປະເທດເກາະນ້ອຍມີຄວາມຈຳກັດທາງດ້ານຊັບພະຍາກອນທຳມະຊາດ ກາຍເປັນປະເທດພັດທະນາທີ່ມີການຂະຫຍາຍຕົວສູງຂອງລວມຍອດຜົນຜະລິດພາຍໃນປະເທດ (GDP) ສະເລ່ຍ 7% ຕໍ່ປີ ນັບແຕ່ປີ 1980 ຫາ 2012[2]. ນອກຈາກນັ້ນລັດຖະບານກໍ່ໄດ້ນຳໃຊ້ນະໂຍບາຍສົ່ງເສີມການຜະລິດເພື່ອສົ່ງອອກ (ຂະນະທີ່ປະເທດເພື່ອນບ້ານຢູ່ອາຊີໃນເວລາດຽວກັນໄດ້ນຳໃຊ້ນະໂຍບາຍສົ່ງເສີມການຜະລິດພາຍໃນເພື່ອທົດແທນການນຳເຂົ້າ ຫຼືນະໂຍບາຍຈຳກັດການນຳເຂົ້າ ເຊັ່ນ: ປະເທດໄທ ແລະ ມາເລເຊຍໃນຕົ້ນຊຸມປີ 1960[3]) ແລະ ການສົ່ງເສີມການລົງທຶນຂອງຕ່າງປະເທດ.

ຫຼັງຈາກໄດ້ຮັບເອກະລາດໃນປີ 1965 ປະເທດສິງກະໂປໄດ້ສຸມໃສ່ເປີດກ້ວາງທາງດ້ານການຄ້າ ແລະ ການລົງທຶນ; ຕົ້ນທຶນສຳຄັນຂອງປະເທດທີ່ໃຊ້ເປັນຈຸດດຶງດູດການຄ້າ ແລະ ການລົງທຶນໃນຊ່ວງທຳອິດ ກໍ່ຄືແຮງງານຈຳນວນຫຼາຍທີ່ມີຄວາມຮູ້ລະດັບວິຊາຊີບຂອງປະເທດ ບວກກັບຄົນເຫຼົ່ານີ້ຮູ້ໃຊ້ພາສາອັງກິດ ແລະ ຄ່າຈ້າງງານທີ່ຕໍ່າ (ໃນເວລາທີ່ເປີດປະເທດໃໝ່ແຮງງານຢູ່ສິງກະໂປຖືວ່າມີຄ່າຈ້າງຕໍ່າໃນຂົງເຂດ). ໄປພ້ອມກັບການໂຄສະນາຈຸດເດັ່ນດັ່ງກ່າວຂອງປະເທດ ລັດຖະບານສິງກະໂປຍັງອະນຸມັດໃຫ້ມີການຈັດສັນພື້ນທີ່ເພື່ອສ້າງເມືອງອຸດສາຫະກຳ (Industrial town), ພັດທະນາເຂດໂຮງງານອຸດສາຫະກຳແບບສຳເລັດຮູບ (Ready-to-move-in factories)[1] ແລະ ໄດ້ຮັບການຫຼຸດອັດຕາອາກອນທຸລະກິດຕ່າງໆໃນໄລຍະເວລາ 5 ປີທຳອິດນຳອີກ; ຍ້ອນປັດໄຈດັ່ງກ່າວສິງກະໂປສາມາດດຶງດູດບໍລິສັດໃຫຍ່ຂ້າມຊາດ (MNC) ຫຼາຍລາຍຈາກຕ່າງປະເທດທີ່ຕ້ອງການຍ້າຍຖານການຜະລິດ ມາປະເທດທີ່ມີຄ່າແຮງງານຖືກ ແລະ ສາມາດເຂົ້າຫາແຫລ່ງວັດຖຸດິບໄດ້ງ່າຍໃນຂົງເຂດ. ດັ່ງນັ້ນໃນຊ່ວງລະຫວ່າງປີ 1965 ຫາ 1978 ແມ່ນເຫັນວ່າຂະແໜງອຸດສາຫະກຳການຜະລິດ (Manufacturing sector) ສາມາດປະ ກອບສ່ວນເຂົ້າໃນ GDP ຂອງປະເທດຈາກ 14% ມາເປັນ 24% ເຊິ່ງເປັນການເພີ່ມຂຶ້ນເກືອບໜຶ່ງເທົ່າໂຕ[4].

## ຂ. ແມ່ນຫຍັງທີ່ເປັນເສົາຄໍ້າຫຼັກຂອງເສດຖະກິດສິງກະໂປ?

ຜົນໄດ້ຮັບຈາກການນຳໃຊ້ນະໂຍບາຍສົ່ງເສີມການຜະລິດເພື່ອສົ່ງອອກ ແລະ ການລົງທຶນຂອງຕ່າງປະເທດ ໄດ້ເຮັດໃຫ້ປະເທດສິງກະໂປກາຍເປັນປະເທດທີ່ເປັນທີ່ຕັ້ງຂອງໂຮງງານ ແລະ ບໍລິສັດຂ້າມຊາດລາຍໃຫຍ່ຂອງໂລກ. ປະເທດໄດ້ເຂົ້າຮ່ວມເຂດການຄ້າເສລີທັງໃນກອບສອງຝ່າຍ ແລະ ຫຼາຍຝ່າຍກັບຫຼາຍປະເທດໂລກ ໂດຍສ່ວນໃຫຍ່ສິງກະໂປຈະຫຼຸດອັດຕາພາສີ 0% ຕໍ່ທຸກສິນຄ້າທີ່ນຳເຂົ້າປະເທດຕັ້ງແຕ່ປີ 1995 ເປັນຕົ້ນມາ[2], ເພື່ອເຮັດໃຫ້ການນຳເຂົ້າສາມາດຊຸກຍູ້ການສົ່ງອອກຂອງປະເທດໄປໃນໂຕ; ນອກຈາກນັ້ນ, ການເຂັ້ມງວດໃນການຈັດຕັ້ງລະບຽບກົດໝາຍພາຍໃນປະເທດ ແລະ ສາກົນຂອງລັດຖະບານແມ່ນໄດ້ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນອີກວິທີໜຶ່ງ ຕົວຢ່າງ: ການປະກາດໃຊ້ກົດໝາຍປົກປ້ອງຊັບສິນທາງປັນຍາໃນປີ 2005[5] ເພື່ອຮັບປະກັນທຸກສິນຄ້າທີ່ຜະລິດຈາກໂຮງງານຢູ່ພາຍໃນປະເທດ ຫຼືນຳເຂົ້າຈາກປະເທດອື່ນແມ່ນຈະໄດ້ຮັບການປົກປ້ອງພາຍໃຕ້ກົດໝາຍດັ່ງກ່າວ. ຂະແໜງອຸດສາຫະກຳການຜະລິດໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງນັບແຕ່ຊຸມປີ 1980 ຫາ 2012 ໂດຍມີອັດຕາການປະກອບສ່ວນຂອງຂະແໜງການນີ້ເຂົ້າໃນ GDP ໂດຍສະເລ່ຍ 24% ຕໍ່ປີ; ແຕ່ເຖິງຢ່າງໃດກໍ່ດີ ສິນຄ້າສ່ວນໃຫຍ່ທີ່ຜະລິດແມ່ນບໍ່ໄດ້ຊົມໃຊ້ພາຍໃນ ແຕ່ເພື່ອສົ່ງອອກ.

ການຂະຫຍາຍຕົວຂອງ ຂະແໜງອຸດສາຫະກຳການຜະລິດ ໄດ້ກາຍເປັນໜຶ່ງໃນຂະແໜງການທີ່ສຳຄັນທີ່ສຸດ ໂດຍຖັດຈາກຂະແໜງບໍລິການທີ່ຖືວ່າເປັນຂະແໜງກົກເຫງົ້າຂອງລະບົບເສດຖະກິດສິງກະໂປ, ຕັ້ງແຕ່ຕົ້ນຂະໜາດຄວາມສຳຄັນຂອງຂະແໜງການນີ້ສາມາດສັງເກດໄດ້ຈາກເປີເຊັນການປະກອບສ່ວນ ຕໍ່ລວມຍອດຜະລິດຕະພັນພາຍໃນຂອງປະເທດຄື 67% ໂດຍສະເລ່ຍຕໍ່ປີ (ເບິ່ງຮູບ 1); ຂະແໜງບໍລິການທ່ອງທ່ຽວແມ່ນຂະແໜງໜຶ່ງທີ່ລັດຖະບານສິງກະໂປສົ່ງເສີມໃນຫຼາຍຮູບແບບ ແລະ ໜຶ່ງໃນນະໂຍບາຍສົ່ງເສີມ ຂອງລັດຖະບານກໍ່ແມ່ນການຍົກເວັ້ນພາສີຕໍ່ນັກທ່ອງທ່ຽວ ແລະ ແຂກຕ່າງປະເທດທີ່ເຂົ້າມາສິງກະໂປໃຫ້ສາມາດຊື້ສິນຄ້າທີ່ບໍ່ລວມອາກອນ (VAT) ຢູ່ທຸກຮ້ານສັບພະສິນຄ້າໃຫຍ່ໆຂອງປະເທດ ໂດຍນັກທ່ອງທ່ຽວສາມາດຂໍເງິນອາກອນຄືນຢູ່ທີ່ສະໜາມບິນ ຫຼືດ່ານສາກົນເວລາທີ່ຈະເດີນທາງກັບປະເທດ. ຈາກຕົວເລກສະຖິຕິການໃຊ້ຈ່າຍ ແລະ ຈຳນວນຂອງນັກທ່ອງທ່ຽວທີ່ເຂົ້າມາສິງກະໂປຂອງອົງການບໍລິຫານການທ່ອງທ່ຽວສິງກະໂປ ປີ 2012 ພົບວ່າທັງຈຳນວນ ແລະ ການໃຊ້ຈ່າຍຂອງນັກທ່ອງທ່ຽວຢູ່ສິງກະໂປ ນັບແຕ່ປີ 2007 ຫາ 2011 ມີອັດຕາສະເລ່ຍເພີ່ມຂຶ້ນທຸກປີໂດຍສະເພາະແມ່ນປີ 2011 ທີ່ມີນັກທ່ອງທ່ຽວເຂົ້າປະເທດຫຼາຍເປັນປະຫວັດການຄື 13,2 ລ້ານຄົນ ແລະ ມີມູນຄ່າໃຊ້ຈ່າຍສະສົມລວມ (cumulative tourism receipts) 22,3 ຕື້ລ້ານໂດລາສິງກະໂປ ຫຼືປະມານ 17,6 ຕື້ລ້ານໂດລາອາເມລິກາ[6] (ອັດຕາແລກປ່ຽນເດືອນກັນຍາ, 2013) (ເບິ່ງຮູບ 2).

**ຮູບສະແດງ 1: ການປະກອບສ່ວນຂອງບໍລິການ ແລະ ການຜະລິດໃນ GDP**




ແຫຼ່ງຂໍ້ມູນ: ທະນາຄານໂລກ (2013)[2].

**ຮູບສະແດງ 2: ຄວາມສຳຄັນຂອງຂະແໜງການທ່ອງທ່ຽວ**




ດັ່ງນັ້ນຈາກຂໍ້ມູນ ແລະສະຖິຕິທີ່ສະແດງຂ້າງເທິງອາດສາມາດເວົ້າໄດ້ວ່າເສົາຄໍ້າຫຼັກຂອງລະບົບເສດຖະກິດຂອງປະເທດສິງກະໂປອັນດັບໜຶ່ງ ແລະ ສອງແມ່ນຂະແໜງການບໍລິການ ແລະຂະແໜງອຸດສາຫະກຳການຜະລິດສິນຄ້າ ຕາມລຳດັບ. ສອງຂະແໜງການນີ້ໄດ້ປະກອບສ່ວນເຂົ້າໃນ GDP ຂອງປະເທດຫຼາຍກວ່າ 90% ແລະມີເຖິງ 99% ຈຳນວນແຮງງານທັງໝົດໄດ້ເຮັດວຽກໃນສອງຂະແໜງການນີ້[2].

## ຄ. ປັດໄຈທີ່ພາໃຫ້ເກີດຜົນສຳເລັດ

ການຂະຫຍາຍຕົວຂອງເສດຖະກິດສິງກະໂປໃນໄລຍະຜ່ານມາ ແມ່ນບໍ່ສາມາດຈະເບິ່ງຂ້າມບົດບາດຂອງລັດຖະບານສິງກະໂປ ທີ່ເຮັດຢູ່ເບື້ອງຫຼັງຂອງຄວາມສຳເລັດດັ່ງກ່າວ. ການນຳໃຊ້ນະໂຍບາຍສົ່ງເສີມການສົ່ງອອກ ແລະ ດຶງດູດການລົງທຶນຕ່າງປະເທດ (ດ້ວຍຈຸດທີ່ຕັ້ງ, ຊັບພະຍາກອນມະນຸດ ແລະ ນະໂຍບາຍພິເສດທາງດ້ານພາສີອາກອນ) ພາຍຫຼັງປະເທດໄດ້ຮັບເອກະລາດເປັນຕົ້ນມາ ໄດ້ເຮັດໃຫ້ປະເທດນີ້ສາມາດໝູນໃຊ້ຄວາມສາມາດບົ່ມຊ້ອນຂອງຕົນໄດ້ຢ່າງເຕັມກຳລັງ. ໜຶ່ງໃນຕົວຢ່າງຂອງລັດຖະບານທີ່ມີສ່ວນຮ່ວມໃນລະບົບເສດຖະກິດ ແມ່ນການສ້າງຕັ້ງລັດວິສາຫະກິດຖືຮຸ້ນເຕມາເສັກ (Temasek Holding Company) ທີ່ໄດ້ຖືຫຸ້ນຢູ່ໃນຫຼາຍກິດຈະການ ເຊັ່ນ: ທະນາຄານ, ການບໍລິການສ້ອມແປງເຮືອ, ຮ້ານຄ້າປອດພາສີ, ສາຍການບິນສິງກະໂປ ແລະ ຍັງໄດ້ຖືຮຸ້ນຢູ່ບໍລິສັດຂອງຕ່າງປະເທດນຳອີກ. ຕົວຢ່າງການເຂົ້າໄປຖືຮຸ້ນສ່ວນໃຫຍ່ຂອງບໍລິສັດຮຸ້ນສ່ວນຊິນນະວັດ (ປະຈຸບັນປ່ຽນຊື່ມາເປັນ Intouch Corporation) ປະເທດໄທ[7].

ໄປພ້ອມກັບບົດບາດທີ່ເປັນຕົວກະຕຸ້ນເສດຖະກິດແລ້ວ (Pro-active State) ລັດຖະບານສິງກະໂປ ຍັງເຂົ້າໄປຄວບຄຸມບໍລິຫານເງິນຄັງສະສົມທັງໝົດຂອງຊາດ (Gross National Saving) 80% ໃນໄລຍະຕົ້ນຂອງການພັດທະນາພາຍແຕ່ປີ 1965 ຈົນເຖິງປີ 1999[8]. ໂດຍຄິດໄລ່ຈາກຂໍ້ມູນຂອງທະນາຄານໂລກ (2013) ພົບວ່າເງິນທຶນສະສົມຂອງປະເທດສິງກະໂປແຕ່ປີ 1980 ຫາ 2012 ມີຂະໜາດໂດຍສະເລ່ຍ 46.5% ຂອງ GDP ແລະ ມີອັດຕາການເພີ່ມຂຶ້ນ ໂດຍສະເລ່ຍປະມານ 1% ຕໍ່ປີ[2]. ຍ້ອນບົດບາດເປັນຜູ້ບໍລິຫານເງິນທຶນສະສົມຂອງປະເທດທີ່ມີມູນຄ່າໂດຍລວມເພີ່ມຂຶ້ນໃນແຕ່ລະໄລຍະ ລັດຖະບານສິງກະໂປສາມາດໃຊ້ເງິນເຫຼົ່ານີ້ເຂົ້າໃນການລົງທຶນກໍ່ສ້າງໂຄງລ່າງພື້ນຖານຂອງປະເທດ ໃຫ້ສາມາດຮອງຮັບການຂະຫຍາຍຕົວທາງດ້ານເສດຖະກິດໃນຕໍ່ໜ້າ ແລະ ກໍ່ເພື່ອເປັນການສ້າງຄວາມເຂັ້ມແຂງທາງດ້ານການແຂ່ງຂັນຂອງພາກເອກະຊົນໃນທາງອ້ອມ.

ສະຫຼຸບແລ້ວ, ຜົນສຳເລັດຂອງການພັດທະນາເສດຖະກິດຢູ່ປະເທດສິງກະໂປໃນໄລຍະຜ່ານມາ ແມ່ນໝາກຜົນຂອງນະໂຍບາຍການພັດທະນາປະເທດຂອງ ລັດຖະບານສິງກະໂປ ທີ່ຖືເອົາການເປີດກວ້າງການພົວພັນການຄ້າກັບຕ່າງປະເທດ ແລະ ສົ່ງເສີມການລົງທຶນຈາກຕ່າງປະເທດເປັນຫຼັກF ເຮັດໃຫ້ປະເທດມີລາຍຮັບຈາກການຄ້າເພີ່ມຂຶ້ນໃນແຕ່ລະປີ ແລະ ກາຍເປັນເງິນທຶນສະສົມຂອງຊາດທີ່ລັດຖະບານສາມາດນຳໃຊ້ເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມໃຫ້ມີຄວາມໝັ້ນຄົງ.

## ງ. ບົດຮຽນທີ່ສາມາດຖອດຖອນໄດ້ຈາກ ປະເທດສິງກະໂປ.

ຈາກບົດຮຽນຂອງປະເທດສິງກະໂປໃນການພັດທະນາເສດຖະກິດ ເຫັນວ່າ ສປປ ລາວ ສາມາດນຳມາເປັນບົດຮຽນ ເພື່ອດັດປັບ ແລະ ໝູນໃຊ້ເຂົ້າໃນການພັດທະນາເສດຖະກິດຂອງປະເທດລາວໄດ້; ສປປ ລາວ ແມ່ນມີຈຸດໄດ້ປຽບທາງດ້ານພູມສັນຖານຄ້າຍຄືປະເທດສິງກະໂປ ເຖິງວ່າປະເທດລາວຈະບໍ່ເປັນປະເທດເກາະດອນທີ່ມີເຮືອກຳປັ່ນໃຫຍ່ມາພັກຜ່ານເພື່ອຄ່ຽນຖ່າຍສິນຄ້າ ແຕ່ປະເທດລາວກໍ່ສາມາດເປັນປະເທດທີ່ເປັນຈຸດພັກເຊົາຂອງສິນຄ້າ ແລະ ເປັນຖານຜະລິດເພື່ອສົ່ງອອກຄືນຂອງຂົງເຂດໄດ້ເຊັ່ນກັນ. ດັ່ງນັ້ນການໝູນໃຊ້ບົດຮຽນຂອງປະເທດສິງກະໂປສາມາດສັງລວມໄດ້ດັ່ງລຸ່ມນີ້:

- ສົ່ງເສີມ ແລະ ລົງທຶນຢ່າງແຂງແຮງຕໍ່ຂະແໜງອາຊີວະສຶກສາ/ໂຮງຮຽນວິຊາຊີບໃຫ້ສາມາດສະໜອງແຮງງານທີ່ມີຄຸນນະພາບ ໂດຍບວກກັບຄວາມໄດ້ປຽບທາງດ້ານຄ່າຈ້າງງານຂອງລາວ ເພື່ອດຶງດູດການລົງທຶນໃນຂະແໜງອຸດສາຫະກຳການຜະລິດທີ່ຈະເກີດຂຶ້ນ ໂດຍສະເພາະໃນເຂດອຸດສາຫະກຳ ແລະ ເຂດເສດຖະກິດພິເສດເຊັ່ນ: ຢູ່ແຂວງຫຼວງນ້ຳທາ, ບໍ່ແກ້ວ ແລະ ສະຫັວນນະເຂດ ທີ່ກຳລັງໄດ້ຮັບການສົ່ງເສີມຂອງລັດຖະບານໃນປະຈຸບັນ.
- ການສົ່ງເສີມການນຳເຂົ້າເພື່ອຜະລິດ ແລະ ສົ່ງອອກຕໍ່ ແມ່ນຍຸດທະສາດທີ່ປະສົບຜົນສຳເລັດຂອງປະເທດສິງກະໂປ ດັ່ງນັ້ນ ສປປ ລາວອາດຕ້ອງໂຄສະນາເພື່ອດຶງດູດການລົງທຶນໃນຂະແໜງການຜະລິດ ແລະ ແປຮູບສິນຄ້າໃຫ້ຫຼາຍຂຶ້ນ ເພາະໃນປະຈຸບັນຂະແໜງທີ່ໂດດເດັ່ນໃນການນຳເຂົ້າເພື່ອຜະລິດແລ້ວສົ່ງອອກຄືນ ແມ່ນມີພຽງຂະແໜງຕັດຫຍິບເທົ່ານັ້ນ.
- ລົງທຶນໃນການປັບປຸງ ແລະ ຂະຫຍາຍພື້ນຖານໂຄງລ່າງທີ່ເປັນຈຸດເຊື່ອມຕໍ່ທາງດ້ານຊາຍແດນ ລະຫວ່າງປະເທດຈະຊ່ວຍສ້າງຄວາມເຊື່ອໝັ້ນຕໍ່ນັກລົງທຶນທີ່ຕ້ອງການຫາແຫຼ່ງລົງທຶນທີ່ສາມາດຫຼຸດຜ່ອນຕົ້ນທຶນການຜະລິດ ໂດຍໜຶ່ງໃນປັດໄຈສຳຄັນຂອງການຫຼຸດຜ່ອນຕົ້ນທຶນການຜະລິດກໍ່ແມ່ນຄ່າໃຊ້ຈ່າຍໃນການຂົນສົ່ງສິນຄ້າ.
- ບົດຮຽນຂອງສິງກະໂປທີ່ນຳໃຊ້ນະໂຍບາຍຍົກເວັ້ນອາກອນໃຫ້ນັກທ່ອງທ່ຽວ ເວລາຊື້ສິນຄ້າຢູ່ພາຍໃນປະເທດ ອາດເປັນອີກບົດຮຽນໜຶ່ງທີ່ ສປປ ລາວ ສາມາດດັດປັບເພື່ອປະຕິບັດໃຫ້ຖືກກັບສະພາບເສດຖະກິດຂອງປະເທດ ເພາະຂະແໜງທ່ອງທ່ຽວແມ່ນຂະແໜງການທີ່ປະເທດລາວ ມີທ່າແຮງສູງໃນການພັດທະນາຄຽງຄູ່ກັບການສົ່ງເສີມການຄ້າ; ເຫັນໄດ້ຈຳນວນນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວໂດຍສະເລ່ຍເພີ່ມຂຶ້ນທຸກປີນັບແຕ່ປີ 1993 ຫາ 2012 ແລະ ສະເພາະປີ 2012 ມີຈຳນວນນັກທ່ອງທ່ຽວເຂົ້າມາປະເທດທັງໝົດ 3,33 ລ້ານຄົນ(ທຽບໃສ່ປີ 2011 ເພີ່ມຂຶ້ນປະມານ 22%) ສາມາດສ້າງລາຍຮັບໃຫ້ປະເທດປະມານ 513,6 ລ້ານໂດລາ ໂດຍເພີມຂຶ້ນປະມານ 26% ທຽບໃສ່ປີ 2011[9].
- ປະເທດສິງກະໂປ ຍັງຖືວ່າເປັນປະເທດທີ່ມີການປະຕິບັດລະບຽບກົດໝາຍທີ່ເຂັ້ມງວດປະເທດໜຶ່ງໃນໂລກ ດ້ວຍເຫດນີ້ໄດ້ເຮັດໃຫ້ນັກລົງທຶນມີຄວາມເຊື່ອໝັ້ນຕໍ່ລະບຽບກົດໝາຍຂອງປະເທດ ໂດຍສະເພາະເມື່ອສິງກະໂປຖືກຈັດອັນດັບໜຶ່ງຂອງປະເທດທີ່ເຮັດທຸລະກິດໄດ້ງ່າຍທີ່ສຸດ (Doing Business) ໃນປີ 2012 ແລະ 2013 ຂອງຂົງເຂດອາຊີ ແລະ ປາຊີຟິກ[10]. ດັ່ງນັ້ນ, ການຍົກສູງສິດ ແລະ ອຳນາດຂອງລະບຽບກົດໝາຍທີ່ໄດ້ປະກາດໃຊ້ຈະເປັນອີກວິທີການໜຶ່ງ ທີ່ສາມາດສ້າງຄວາມເຊື່ອໝັ້ນຕໍ່ນັກລົງທຶນສາກົນ ແລະ ຊ່ວຍລັດຖະບານໃນການພັດທະປະເທດໃຫ້ກ້າວໜ້າຕາມທິດທີ່ໄດ້ກຳນົດໄວ້.

### ເອກະສານອ້າງອີງ.


1. Cahyadi G, Kursten B, Weiss M, and Yang G (2004), *Singapore's Economic Transformation*, Global Urban Development, ເຂົ້າເບິ່ງ 2 ກັນຍາ 2013, <www.globalurban.org/ GUD%20Singapore%20MES%20Report.pdf>
2. *Databank (2013),* World Bank, ເຂົ້າເບິ່ງ 4 ກັນຍາ 2013, <http://databank.worldbank.org/data/views/variableselection/selectvariables.aspx?source=world-development-indicators>
3. Juanjai A (1987), 'Trade Patterns and Trends of Thailnad', in Trade and Structural Change in Pacific Asia, Colin I. Bradford, Jr. and William H. Branson, Chicago, p.467.

   Lee C (2005), *Industrial Policy and Competition Policy in Malaysia, Japanese Faire Trade Commission*, ເຂົ້າເບິ່ງ 4 ກັນຍາ 2013, <www.jftc.go.jp/eacpf/05/AOTS/malaysia _cassey.pdf>
4. MTI Insights 1965-1978 (2013), Ministry of Trade and Industry Singapore, ເຂົ້າເບິ່ງ 4 ກັນຍາ 2013, <http://www.mti. gov.sg/MTIInsights/Pages/1965-—-1978.aspx>
5. Deloitte (2012), *Taxation and Investment in Singapore 2012: Reach, relevance and reliability*, ເຂົ້າເບິ່ງ 2 ກັນຍາ 2013, <http://www.deloitte.com/assets/Dcom-Global/Local%20Assets/Documents/Tax/Taxation%20and%20Investment%20Guides/2012/dttl_tax_guide_2012_Singapore.pdf>
6. Singapore Tourism Board (2012), Singapore Tourism Board Annual Report 2012,ເຂົ້າເບິ່ງ 2 ກັນຍາ 2013, <www1. yoursingapore.com/annualreport/pdf/stb_ar_2012.pdf>
7. Wikipedia (2013), *Temasek Holdings*, ເຂົ້າເບິ່ງ 2 ກັນຍາ 2013, <http://en.wikipedia.org/wiki/Temasek_Holdings#cite _note-59>
8. Hopf G (2009), 'Saving and investment: the economic development of Singapore 1965-99', The London School of Economic and Political Science, ເຂົ້າເບິ່ງ 3 ກັນຍາ 2013, <http://eprints.lse.ac.uk/38480/1/Hopf_Saving_and_investment_(lsero).pdf>
9. Lao Ministry of Information and Tourism (2012), Statistical Report 2012 on Tourism in Lao, Tourism Development Department, Vientiane.
10. World Bank (2013), *Doing Business 2013: Smarter Regulations for SMEs*, ເຂົ້າເບິ່ງ 4 ກັນຍາ 2013, <http://www.doingbusiness.org/~/media/giawb/doing%20business/documents/profiles/country/SGP.pdf>



**ຂໍ້ມູນເພີ່ມເຕີມຕິດຕໍ່ໄດ້ທີ່ພະແນກຝຶກອົບຮົມ**

**ສະຖາບັນຄົ້ນຄ້ວາເສດຖະກິດການຄ້າ (ສສຄ), ກະຊວງອຸດສາຫະກຳ ແລະ ການຄ້າ**

**ໂທ ແລະ ແຟັກ: 856 21 417084 http://laosaft.org/erit/**